## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 13 ມີນາ 2004 ( 3-13-2004)

---

## <u>ພຣະເຢຊູ: ຊົງເປັນພຣະມະຫາກະສັດຂອງພວກເຮົາ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຢຮັນ12:12-15; 18:33-37; 19:1-3, 14-16

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເຖິງແມ່ນວ່າ ຊາວຢິວແລະຜູ້ມີອຳນາດຂອງຊາວໂຣມປະຕິເສດວ່າ ພຣະເຢຊູບໍ່ແມ່ນກະສັດກໍຕາມ, ພຣະອົງຊົງເປັນພຣະມະຫາກະສັດອົງທ່ຽງແທ້ຂອງຜູ້ທີ່ຈົ່ງຮັກພັກດີຕໍ່ພຣະອົງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຈະຊ່ອຍທ່ານໃຫ້ໝັ້ນໃຈວ່າ ພຣະເຢຊູຊົງເປັນພຣະມະຫາກະສັດໃນຊີວິດຂອງທ່ານ.

## <u>ເປັນຫຍັງຂ້າພະເຈົ້າຄວນຈະໃຫ້ພຣະເຢຊູເປັນກະສັດໃນຊີວິດຂອງຂ້າພະເຈົ້າ?</u>

ແມ່ນຜູ້ໃດເປັນກະສັດໃນອາເມຣິກາ? ໃຫ້ມາສັງເກດເບິ່ງຂໍ້ຄວາມດັ່ງຕໍ່ໄປນີ້: ໃນປີ 1950 ລາຍການໂທຣະທັດປະຈຳອາທິດອອກລາຍການຂອງ ທ່ານຣອຍ ຣໍເຈີຣສ (Roy Rogers) ເໝືອນກັບວ່າລາວເປັນ "ກະສັດຂອງພວກລ້ຽງງົວ" (King of the cowboys). ເມື່ອແອລວິສ ແພຣສລີ (Elvis Presley) ເສັຽຊີວິດ, ວາຣະສານປະກາດວ່າ "ກະສັດຂອງຣອກແກນໂຣ" (king of rock and roll) ເສັຽຊີວິດແລ້ວ. ຕໍ່ມາບໍ່ນານມານີ້ ມີພາບພະຍົນທີ່ນິຍົມກັນຫລາຍມີຊື່ວ່າ The Lord of Rings (ຈອມເຈົ້າແຫ່ງແຫວນອຳນະຖຸ້ນ) ພາກທີສາມມີຊື່ວ່າ "The Return of the King" (ການສະເດັດກັບຂອງອົງກະສັດ).

ສາມາດເວົ້າໄດ້ບໍ່ວ່າ "ຈອມເຈົ້າຂອງກະສັດທັງຫລາຍຄົງຊົບຢູ່? ຕາມຄວາມຄິດຂອງຄົນສມັຍນີ້ ມີຄວາມຈຳເປັນບໍ່ທີ່ກະສັດຈະຕ້ອງກັບຄືນມາ? ເຖິງແມ່ນວ່າມີຫລາຍຄົນໄດ້ຮັບຕຳແໜ່ງເປັນ "ກະສັດ," ບົດຮຽນນີ້ຈະຊ່ອຍໃຫ້ທ່ານເຂົ້າໃຈວ່າພຣະເຢຊູຊົງເປັນພຣະມະຫາກະສັດອົງທ່ຽງແທ້ ສົມກັບວ່າທຸກຄົນຈະຕ້ອງຈົ່ງຮັກພັກດີຕໍ່ພຣະອົງ.

## <u>ສຶກສາພຣະຄັມພີ</u>

1. **<u>ຈົ່ງຕ້ອນຮັບພຣະມະຫາກະສັດ</u>** (ໂຢຮັນ 12:12-15)

   **ປະຊາຊົນຫລວງຫລາຍ** ໄດ້ມາເຕົ້າໂຮມກັນໃນກຸງເຢຣູຊາເລັມ ເພື່ອມາໃນງານເທສການວັນປັສຄາ (ໃຫ້ເບິ່ງ ໂຢຮັນ 12:1). ຊາວຢິວມາຈາກທຸກທີ່ວມຸມໂລກແລະຮ່ວມທັງຊາວຢິວທີ່ໄດ້ຕິດຕາມພຣະເຢຊູ ຫລັງຈາກພວກເຂົາໄດ້ເຫັນພຣະອົງຊົງບັນດານໃຫ້ລາຊະໂຣຄືນມາຈາກຕາຍ (ໃຫ້ເບິ່ງ 12:17) ຕ່າງກໍພາກັນຕ້ອນຮັບພຣະອົງ. ຝູງຊົນທີ່ຕ້ອນຮັບພຣະອົງເຫັນພຣະອົງເປັນເໝືອນຜູ້ທີ່ຈະມາປົດແອກຂອງພວກເຂົາ. ພວກເຂົາຫວັງວ່າພຣະອົງຈະປົດປ່ອຍພວກເຂົາໃຫ້ເປັນອິສຣະຈາກການຂົ່ມເຫັງຂອງຈັກກະພັດໂຣມ.

   ຝູງຊົນພາກັນຖື **ກ້ານຕານອອກໄປຕ້ອນຮັບ** ພຣະເຢຊູ. ຕາມປະເພນີຂອງຊາວຢິວແມ່ນການຕ້ອນຮັບການກັບມາຂອງວິຣະບຸຣຸດຂອງພວກເຂົາ. ໃນຂະນະນີ້ພວກເຂົາໄດ້ຕ້ອນຮັບການສະເດັດມາຂອງ **ພຣະມະຫາກະສັດຂອງຊາດອິສຣາເອັນ.**

   ໃນຕອນເລີ້ມແລກຂອງການປະກາດຂອງພຣະເຢຊູ ພວກເຂົາຈະມາຈັບເອົາພຣະອົງໄປແຕ່ງຕັ້ງໃຫ້ພຣະອົງເປັນ

ກະສັດ ພຣະອົງຊົງສະເດັດໜີຈາກພວກເຂົາ (ໂຢຮັນ 6:15). ແຕ່ມາຕອນນີ້ ມາຮອດບັ້ນປາຍຂອງການປະກາດຂອງພຣະອົງ ເຖິງແມ່ນວ່າພວກຜູ້ປົກຄອງປອງຮ້າຍເພື່ອຈະຂ້າພຣະອົງເສັຽ ພຣະອົງສມັກໃຈສະເດັດເຂົ້າໄປຍັງກຸງເຢຣູຊາເລັມຢ່າງເປີດເຜີຍ ເພື່ອໃຫ້ປະຊາຊົນເຫັນວ່າພຣະອົງຊົງເປັນພຣະມະຫາກະສັດຂອງພວກເຂົາ. ເວລາສຸດທ້າຍຂອງພຣະອົງໃນໂລກນີ້ມາເຖິງແລ້ວ ພຣະອົງຊົງສຳເຣັດການປະກາດໃນໂລກນີ້. ສິ່ງທີ່ໜ້າສັງເວດນັ້ນ ຝູງຊົນຍັງບໍ່ເຂົ້າໃຈການສະເດັດມາຂອງພຣະອົງ.

ພວກເຂົາໂຫ່ຮ້ອງວ່າ "**ໂຮຊັນນາ!**" ເປັນການສະແດງອອກຂອງຊາວຢິວທີ່ມີຄວາມໝາຍວ່າ "ຂໍໃຫ້ຊ່ອຍດຽວນີ້" ຊາວຢິວຄິດເຖິງແຕ່ທາງດ້ານການເມືອງຫລາຍກວ່າ ພວກເຂົາຮ້ອງວ່າ "**ຂໍໃຫ້ທ່ານຜູ້ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ!**" (ເພງສັຣເສີນ 118:25-26). ຫລາຍກວ່າຮ້ອຍປີກ່ອນພຣະອົງສະເດັດມາ ຝູງຊົນໄດ້ຮ້ອງຕ້ອນຮັບ ຊີໂມນ ແມັກກະບີ (Simon Maccabaeus) ວິຣະບຸຣຸດທາງດ້ານທະຫານດ້ວຍຄຳໂຫ່ຮ້ອງອັນດຽວກັນ.

ມະຫາກະສັດໄດ້ສະເດັດມາຫາ **ບຸດຍິງຂອງຊີໂອນ,** ເປັນຄຳເວົ້າທີ່ມັກໃຊ້ຢູ່ປະຈຳໃນສມັຍພຣະສັນຍາເດີມ ເມື່ອອ້າງອີງເຖິງເຢຣູຊາເລັມ. ໜ້າທີ່ການມອບໝາຍທີ່ພຣະເຢຊູໄດ້ຮັບນັ້ນ ບໍ່ແມ່ນມາຊ່ອຍກູ້ເອົາບ້ານເມືອງຫລືວ່າຈາກອຳນາດການປົກຄອງຂອງຈັກກະພັດໂຣມ. **ມະຫາກະສັດ** ອົງນີ້ບໍ່ໄດ້ສະເດັດມາເພື່ອເອົາຊະນະທາງດ້ານການທະຫານ ຫລືການເມືອງໃດໆທັງສິ້ນ. ພຣະອົງສະເດັດມາ "ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ" (ມັດທາຍ 1:21).

**ມະຫາກະສັດຂອງທ່ານກໍປະທັບລໍນ້ອຍສະເດັດມາ,** ເຊິ່ງເປັນສັນຍາລັກຂອງການຖ່ອມຕົວແລະສັນຕິສຸກ (ເສກາຣີຢາ 9:9). ພຣະອົງບໍ່ເໝືອນກັບຜູ້ນຳຄົນອື່ນໆສະເດັດເຂົ້າກຸງດ້ວຍຣົດຮົບຫລືນັ່ງຢູ່ຫລັງເທິງຕົວອູດ.

ຜູ້ນຶ່ງຜູ້ໃດຈະຕ້ອນຮັບພຣະເຢຊູໃຫ້ເຂົ້າມາເປັນພຣະມະຫາກະສັດໃນຊີວິດຂອງລາວໄດ້ຢ່າງໃດ?

2. <u>ຈົ່ງເຂົ້າໃຈພຣະມະຫາກະສັດ</u> (ໂຢຮັນ 18:33-37)

ປີລາດຢາກຈະຮູ້ກໍເລີຍຖາມພຣະເຢຊູວ່າ, "**ເຈົ້າເປັນກະສັດຂອງຊາວຢິວຫລື?**" ກ່ອນໜ້າບໍ່ທໍ່ໃດວັນນັ້ນ ຝູງຊົນໄດ້ໂຫ່ຮ້ອງຕ້ອນຮັບພຣະອົງຈາກການສະເດັດເຂົ້າກຸງເຢຣູຊາເລັມເໝືອນເປັນ "ພຣະມະຫາກະສັດຂອງຊາດອິສຣາເອັນ" (12:13). ໃນຕອນນີ້ ພຣະອົງຖືກຕັດສິນເນື່ອງຈາກວ່າເປັນກະສັດ ແລະຝູງຊົນໂຫ່ຮ້ອງຕ້ອງການຊີວິດຂອງພຣະອົງ. ເປັນອັນວ່າເຮັດໃຫ້ຜູ້ທີ່ຈະມາຕັດສິນຄະດີນີ້ສງົບສົນເທ້ບໍ່ແມ່ນບໍ?

ພຣະເຢຊູຊົງຕອບປີລາດຈາກຄຳຖາມຂອງລາວເອງວ່າ, "**ທ່ານຖາມຢ່າງນັ້ນແຕ່ລຳພັງຂອງທ່ານເອງຫລື ຫລືວ່າຄົນອື່ນບອກທ່ານເຖິງເຣື່ອງເຮົາ?**" ປີລາດຖາມພຣະອົງຍ້ອນລາວເອງຢາກຮູ້ ຫລືວ່າຖາມໄປຍ້ອນວ່າຖືກຄວາມກົດດັນຈາກຝູງຊົນ? ຜູ້ປົກຄອງຄົນນີ້ໄດ້ສະແດງອອກໃຫ້ເຫັນວ່າລາວບໍ່ມີຄວາມສົນໃຈອັນໃດເລີຍ. ມີຫລາຍຄົນໃນສມັຍນີ້ບໍ່ສົນໃຈເລີຍກັບພຣະເຢຊູ. ສຳລັບເຂົາແລ້ວ ສຳຄັນແທ້ບໍ່ວ່າຖ້າພຣະອົງຊົງເປັນກະສັດ. ອີກປະການນຶ່ງຄົນຜູ້ນຶ່ງຖາມຕົວເອງວ່າ, "ພຣະເຢຊູເປັນກະສັດຂອງຂ້ອຍບໍ?"

"**ເຈົ້າໄດ້ເຮັດອັນໃດ?**" ປີລາດອາດຈະຢາກຮູ້ວ່າເປັນຫຍັງຝູງຊົນຈຶ່ງຜັກດັນລາວຫລາຍແທ້ ເພື່ອໃຫ້ລາວສັ່ງຂ້າພຣະອົງເສັຽ. ແຕ່ສຳລັບລາວເອງ ລາວເຫັນວ່າພຣະອົງບໍ່ມີພິດພັຍອັນໃດເລີຍຕໍ່ການປົກຄອງຂອງລາວ ລາວອາດຈະສົງໃສວ່າເປັນຫຍັງຝູງຊົນຈຶ່ງຊັງພຣະອົງແທ້.

ໃນຄຳຕອບຂອງພຣະເຢຊູຊົງບອກແລ້ວ ພຣະອົງຮັບຮູ້ແລະບັນລະຍາຍໃຫ້ປີລາດຮູ້ວ່າ "**ຣາຊອຳນາດຂອງເຮົາບໍ່ເປັນແຕ່ໂລກນີ້**". ຣາຊອຳນາດຂອງພຣະອົງຢູ່ໃນຈິດໃຈຂອງຜູ້ທີ່ຕ້ອນຮັບພຣະອົງເທົ່ານັ້ນ. ບໍ່ມີຄວາມຈຳເປັນອັນໃດເລີຍທີ່ຈະຕ້ອງມີກອງທັບຂອງທະຫານມາປົກປ້ອງພຣະອົງໄວ້.

**ປີລາດຈຶ່ງທູນພຣະອົງວ່າ, "ຖ້າດັ່ງນັ້ນເຈົ້າເປັນກະສັດຕີ້?"** ຄຳຖາມຂອງລາວມີເຫດຜົນ. ຖ້າກະສັດມີຣາຊອຳນາດ ພະອົງກໍເປັນກະສັດບໍ່ແມ່ນບໍ?

ສິ່ງທີ່ພຣະເຢຊູຊົງກ່າວຕໍ່ປີລາດນັ້ນເປັນຄວາມຈິງ. ສັດຕຣູຂອງພຣະເຢຊູໄດ້ກ່າວຫາພຣະອົງນັ້ນບໍ່ເປັນຄວາມຈິງ.

ຖ້າລາວຫາກຊອກຫາຄວາມຈິງແທ້ ລາວກໍຈະພົບໃນພຣະອົງອົງຊົງສະຖິດຢູ່ຕໍ່ໜ້າຂອງລາວ. ພຣະອົງສະເດັດມາໃນໂລກນີ້ເພື່ອເປີດເຜີຍຄວາມຈິງກ່ຽວກັບເຣື່ອງຣາຊອານາຈັກຂອງພຣະເຈົ້າ.

ພຣະເຢຊູຊົງເປັນພຣະມະຫາກະສັດໃນຊີວິດຂອງທ່ານຫລືບໍ່? ຖ້າຫາກວ່າເປັນເຫມືອນວ່ານັ້ນ ຊີວິດຂອງທ່ານແຕ່ລະວັນມີຄວາມແຕກຕ່າງຢ່າງໃດ?

3. <u>**ຈົ່ງຖວາຍມົງກຸດແດ່ພຣະມະຫາກະສັດ**</u> (ໂຢຮັນ 19:1-3)

ຂ້າພະເຈົ້າໄດ້ບັນລະຍາຍໃຫ້ທີ່ປະຊຸມຟັງເຣື່ອງຂອງພວກທະຫານໄດ້ກະທຳຕໍ່ພຣະເຢຊູ ໃນເວລານັ້ນ ມີເດັກຍິງອາຍຸຫ້າປີຄົນນຶ່ງນັ່ງຢູ່ຂ້າງແມ່ຕູ້ຂອງລາວໄດ້ຮ້ອງຂຶ້ນວ່າ "ມັນເຮັດໃຫ້ຂ້ານ້ອຍຢາກຮ້າຍຫລາຍ!" ແມ່ນຫຍັງທີ່ເຮັດໃຫ້ເດັກຄົນນັ້ນຮູ້ສຶກຢ່າງນັ້ນ?

**ປີລາດ** ສັ່ງໃຫ້ເອົາພຣະອົງໄປ **ຂ້ຽນ**. ພວກທະຫານໃຊ້ໄມ້ແສ້ຫນັງຂ້ຽນພຣະອົງ. ໄມ້ແສ້ຫນັງນັ້ນມີຄັນເປັນໄມ້ ແລະຕໍ່ຈາກຄັນຈັບຂອງມັນແລ້ວມີແສ້ຫນັງຫລາຍເສັ້ນ ປາຍຂອງແສ້ຫນັງນັ້ນບາງເສັ້ນກໍເອົາເຫລັກເປັນຄືຂໍເກາະມາມັດໃສ່ ແລະບາງເສັ້ນກໍເອົາກະດູກມາມັດໃສ່. ແຕ່ລະຄັ້ງໄມ້ແສ້ຟາດໄປຖືກພຣະອົງ ມັນຈະໄປເກາະແລະຂູດເອົາຊີ້ນແລະຫນັງຂອງພຣະອົງອອກມາ. ໃຫ້ວາດມະໂນພາບເບິ່ງວ່າຄວາມເຈັບປວດທີ່ພຣະອົງຈະຕ້ອງທົນຮັບເອົາຫລາຍປານໃດຫນໍ! **ພວກທະຫານໄດ້ເອົາເຄືອຫນາມມາຖັກເປັນໂຄ້ງແທນພວງມາລັຍສຸບໃສ່ພຣະສຽນຂອງພຣະອົງ**. ພວກເຂົາໄດ້ຕົ້ມເຄືອຫນາມມາຄຽນໃຫ້ເປັນມົນໆ ໃຫ້ເຫມືອນກັບມົງກຸດແລ້ວມາສຸບໃສ່ຫົວຂອງພຣະອົງແທນມົງກຸດ  ຫນາມຈາກເຄືອເຫລົ່ານັ້ນສຽບເຂົ້າໄປໃນຫນ້າຜາກແລະອ້ອມຫົວຂອງພຣະອົງຢ່າງທາລຸນ.

ພວກເຂົາເຮັດຫມິ່ນປມາດພຣະອົງ ເຫມີນກັບໃນວັນແຕ່ງຕັ້ງກະສັດຄົນໃຫມ່ແລະມອບມົງກຸດໃຫ້ກັບກະສັດຄົນໃຫມ່ນັ້ນ. ພວກເຂົາເອົາ **ເສື້ອຄຸມສີມ່ວງອ່ອນມານຸ່ງໃຫ້ພຣະອົງ**. ສີມ່ວງເປັນສີຂອງສັນຍາລັກຂອງພວກຣາຊວົງ. ໃນຕອນຈະປິດພິທີອັນໂຫດຮ້າຍຂອງພວກເຂົານັ້ນ ພວກເຂົາໄດ້ກ່າວປະມາດວ່າ "**ກະສັດຂອງຊາວຢິວເອີຍ ຈົ່ງຊົງພຣະຈະເຣີນເທີນ!**" ທ່ານເຫັນວ່າເປັນໄປໄດ້ບໍ່ ພວກເຂົາ **ຕົບພຣະພັກ** ພຣະເຈົ້າ? ພວກເຂົາບໍ່ຮູ້ວ່າພຣະອົງຊົງແມ່ນຜູ້ໃດ ພວກເຂົາກໍໄດ້ກະທຳໄປຢ່າງນັ້ນແລ້ວ.

ເຫມືອນກັບເດັກຍິງຄົນນັ້ນ ພວກເຮົາຮູ້ສຶກຢາກຮ້າຍໃນການກະທຳຂອງພວກທະຫານຕໍ່ກະສັດຂອງພວກເຮົາ. ແທນທີ່ຈະຢາກຮ້າຍໃຫ້ພວກທະຫານ ໃຫ້ພວກເຮົາມາຮ້າຍການກະທຳບາບຂອງພວກເຮົາເອງດີກວ່າ. ຄວາມບາບຂອງພວກເຮົາໄດ້ເຮັດໃຫ້ພວກເຮົາບອບຊ້ຳທາງຝ່າຍຈິດວິນຍານຫລາຍ ຄວາມບາບນັ້ນໄດ້ແຍກໃຫ້ພວກເຮົາຈາກພຣະອົງ (ໃຫ້ອ່ານພຣະທັມໂຣມ 3:23; 6:23). ພຣະເຢຊູໄດ້ຮັບຄວາມທົນທຸກລຳບາກຍ້ອນບາບຂອງພວກເຮົາ. ຂ່າວດີນັ້ນກໍຄືວ່າ "ດ້ວຍບາດແຜຂອງພຣະອົງ ທ່ານທັງຫລາຍກໍດີປົກກະຕິແລ້ວ" (1 ເປໂຕ 2:24). ຈິດໃຈຂອງພວກເຮົາຈະຕ້ອງກົ້ມຂາບຕໍ່ພຣະເຢຊູ ໃຫ້ພຣະອົງຊົງເປັນພຣະມະຫາກະສັດຂອງພວກເຮົາ ແລະໃຫ້ພວກເຮົາຈົ່ງຮັກພັກດີຕໍ່ພຣະອົງ ໃຫ້ພຣະອົງຊົງເປັນພຣະຜູ້ເປັນເຈົ້າແລະເປັນພຣະຜູ້ໂຜດໃຫ້ພົ້ນຂອງພວກເຮົາຢ່າງແທ້ຈິງ.

ວັນນັ້ນຈະມາເຖິງ ທຸກຄົນຈະໄດ້ກົ້ມຂາບພຣະເຢຊູແລະທຸກຄົນຈະຍອມຮັບວ່າພຣະເຢຊູຄຣິດຊົງເປັນອົງພຣະຜູ້ເປັນເຈົ້າ (ຟີລິບປອຍ 2:9-11). ທ່ານສາມາດເວົ້າໄດ້ບໍ່ວ່າ ພຣະອົງຊົງເປັນພຣະມະຫາກະສັດຂອງທ່ານ? ເມື່ອວັນນັ້ນມາເຖິງ ທ່ານຈຶ່ງຈະຮັບເອົາພຣະອົງມັນກໍຈະຊ້າເກີນໄປເສັຽແລ້ວ.

4. <u>**ຈົ່ງຖວາຍກຽດແດ່ພຣະມະຫາກະສັດ**</u> (ໂຢຮັນ 19:14-16)

**ວັນນັ້ນເປັນວັນຈັດແຈງປັສຄາ** ເປັນວັນສຸກຂອງອາທິດເທສການປັສຄາ (ໂຢຮັນ 13:1; 18:28). ໃນຂນະທີ່ຊາວຢິວໄດ້ຈັດແຈງຕຽມຈິດຕຽມໃຈຂອງພວກເຂົາ ເພື່ອລະນຶກເຖິງວັນທີ່ພຣະເຈົ້າໄດ້ນຳບັນພະບຸຣຸດຂອງພວກເຂົາອອກຈາກປະເທດອີຢິບ ພຣະເຈົ້າຊົງປະທານອິສຣະພາບໃຫ້ກັບມະນຸດຊາດອີກຄັ້ງນຶ່ງ. ຄັ້ງນີ້ແມ່ນອິສຣະພາບຈາກຄວາມຜິດບາບທີ່ພວກເຮົາໄດ້ສ້າງໄວ້ ແລະມີການພົວພັນກັບການສິ້ນພຣະຊົນຂອງພຣະມະຫາກະສັດ.

"**ນີ້ຄືກະສັດຂອງພວກທ່ານ**" ປີລາດປະກາດແລະມອບພຣະອົງໃຫ້ກັບຊາວຢິວຕາມທີ່ພວກເຂົາຕ້ອງການ. ລາວສເນີຕໍ່ຊາວຢິວວ່າ ພຣະເຢຊູຊົງເປັນກະສັດ "ຂອງພວກທ່ານ" ສອງເທື່ອ (ໂຢຮັນ 19:14, 15). ຝູງຊົນປະຕິເສດບໍ່ຍອມຮັບຄໍາສເນີຂອງປີລາດ. ກ່ອນໜ້ານັ້ນພວກເຂົາເອງປະກາດວ່າ "ພຣະອົງຊົງເປັນມະຫາກະສັດຂອງຊົນຊາດຢິວ" (12:13). **ພວກປະໂລຫິດຕົນໃຫຍ່** ປະກາດວ່າ, "**ເວັ້ນແຕ່ກາຍຊາແລ້ວ ພວກເຮົາບໍ່ມີກະສັດ.**" ຄໍາຖແລງການຢ່າງນີ້ຜິດຕໍ່ຫລັກຄວາມເຊື່ອຂອງຊາວຢິວ. ຝູງຊົນຖືກຜູ້ນໍາສາສນາພາໃຫ້ຫລົງຜິດເຮັດໄປຕາມ. ຜູ້ທີ່ກ່າວຄໍາຖແລງຢ່າງນັ້ນເປັນເຫມືອນກັບວ່າຜູ້ກ່ຽວໄດ້ປະຖິ້ມຫລັກສາສນາຂອງຕົນເສັຽ. ຄໍາຖແລງດັ່ງກ່າວນັ້ນຈະເຮັດໃຫ້ຈິດໃຈຂອງຊາວຢິວທີ່ເຄັ່ງຄັດທາງດ້ານສາສນາລະລາຍໄປ. ຊາວຢິວຈະບໍ່ກົ້ມຂາບກະສັດອົງໃດ ເວັ້ນເສັຽແຕ່ພຣະມະຫາກະສັດອົງດຽວຄືອົງພຣະຜູ້ເປັນເຈົ້າ. ພວກເຮົາຜູ້ເປັນຄຣິສຕຽນໃຫ້ສຶກສາເບິ່ງຄັກແນ່: ເຖິງແມ່ນວ່າຈະຢູ່ໃນສະພາບການຖືກຫຸ້ມຮັດກໍຕາມ ຄຣິສຕຽນຈະຕ້ອງຈົ່ງຮັກພັກດີຕໍ່ພຣະມະຫາກະສັດຂອງພວກເຂົາຢູ່ສເມີ. ຄວາມຮູ້ສຶກຢ່າງແຮງກ້າ, ຄວາມຮ້າຍ, ຫລືການຖືກຊັກຊວນໃຫ້ຫລົງຜິດກໍຕາມ ຢ່າໃຫ້ສິ່ງເຫລົ່ານີ້ຊັກຈູງໄພ່ພົນຂອງພຣະເຈົ້າໃຫ້ຢຸດຈົ່ງຮັກພັກດີຕໍ່ພຣະອົງ.

ຊີວິດນີ້ມີທາງເລືອກ. ຝູງຊົນມີທາງເລືອກວ່າຈະຮັບເອົາພຣະເຢຊູມາເປັນກະສັດຂອງພວກເຂົາ ຫລືວ່າຈະປະຕິເສດພຣະອົງກໍໄດ້. ສຽງຮ້ອງຂອງພວກເຂົາດັງກ້ອງໄປວ່າ "**ເອົາມັນໄປເສັຽ ເອົາມັນໄປເສັຽ ຄຶງມັນໄວ້ທີ່ໄມ້ກາງແຂນ**" ເປັນການປະກາດຢ່າງແຈ່ມແຈ້ງເຖິງການເລືອກຂອງພວກເຂົາ. ໂຢຮັນໄດ້ບັນລະຍາຍເຖິງການເລືອກຂອງພວກເຂົາ: "ພຣະອົງໄດ້ສະເດັດມາຍັງບ້ານເມືອງຂອງພຣະອົງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່ໄດ້ຕ້ອນຮັບພຣະອົງ" (1:11).

ປີລາດກໍມີທາງເລືອກຄືກັນ ລາວຈະເຮັດຢ່າງໃດກັບພຣະເຢຊູ. ໃນເມື່ອຝູງຊົນຮຽກຮ້ອງຕ້ອງການດັ່ງນັ້ນ **ແລ້ວປີລາດຈຶ່ງມອບພຣະອົງໃຫ້ເຂົາ ເພື່ອເອົາໄປຄຶງທີ່ໄມ້ກາງແຂນ**. ເມື່ອພວກເຮົາຫາກໄປຟັງຫາງສຽງຂອງຝູງຊົນສ່ວນມາກແລ້ວພວກເຮົາຈະພົບຄວາມຫາຍະນະ. ພວກເຮົາແຕ່ລະຄົນຈະຕ້ອງຕັດສິນໃຈດ້ວຍຕົນເອງວ່າຈະເຮັດຢ່າງໃດກັບພຣະເຢຊູ. ພວກເຮົາຈະຮັບເອົາພຣະອົງໃຫ້ເປັນພຣະມະຫາກະສັດ ຫລືວ່າຈະປະຕິເສດພຣະອົງບໍ່? ດັ່ງທີ່ໄດ້ກ່າວມານີ້ແຫລະ ພຣະເຢຊູຊົງເປັນຜູ້ທີ່ພວກເຮົາຈະຕ້ອງຈົ່ງຮັກພັກດີ.

ໃນເມື່ອທ່ານຢາກຈະເຮັດໃນສິ່ງທີ່ທ່ານຄວນຈະເຮັດ ທ່ານເຄີຍໄດ້ຮັບຄວາມກົດດັນຈາກຄົນທີ່ຢູ່ອ້ອມຂ້າງອ້ອມແອວຂອງທ່ານໃນເຣື່ອງນີ້ ທ່ານມີຄວາມຮູ້ສຶກຢ່າງໃດ? ທ່ານແກ້ໄຂກັບບັນຫານີ້ຢ່າງໃດ?

ການອະນຸຍາດໃຫ້ພຣະເຢຊູມາເປັນພຣະມະຫາກະສັດຂອງພວກເຮົາໄດ້ຊ່ອຍໃຫ້ພວກເຮົາຕັດສິນໃຈວ່າຖືກຕ້ອງໄດ້ຢ່າງໃດ?

ການຖວາຍກຽດແດ່ພຣະອົງຢ່າງຖືກຕ້ອງພວກເຮົາຈະຕ້ອງ:

- ຈົ່ງຕ້ອນຮັບພຣະອົງເຂົ້າມາໃນຊີວິດຂອງທ່ານ ໃຫ້ພຣະອົງເປັນອົງພຣະຜູ້ເປັນເຈົ້າແລະພຣະຜູ້ໂຜດຂອງທ່ານ.
- ຈົ່ງເຂົ້າໃກ້ສະນິດພຣະອົງແລະໃຊ້ຊີວິດໃນຄວາມຈິງຂອງພຣະອົງ.
- ຈົ່ງຖວາຍມົງກຸດແດ່ພຣະອົງແລະອຸທິດຕົວໃຫ້ພຣະອົງ. ພຣະອົງຊົງເປັນພຣະມະຫາກະສັດ ພຣະອົງໄດ້ຮັບຄວາມທຸກທໍຣະມານແລະສິ້ນພຣະຊົນທີ່ໄມ້ກາງແຂນເພື່ອພວກເຮົາຈະໄດ້ຊີວິດອັນຕລອດໄປເປັນນິດ.
- ຈົ່ງດໍາເນີນຊີວິດເພື່ອພຣະອົງເຖິງແມ່ນວ່າຈະປະເຊີນກັບຄວາມຜັກດັນໃດໆກໍຕາມ.

(ອຸປຖັມໂດຍ ລຂບສ www.lsbf.org)